Hồ Nghĩa Dũng **Bộ trưởng Bộ Giao thông vận tải**	**Sommad Pholsena** **Bộ trưởng Bộ Công chính và vận tải**

ອະນຸສັນຍາ

ວ່າດ້ວຍ ການປະຕິບັດສັນຍາເພື່ອອຳນວຍຄວາມສະດວກໃຫ້ແກ່ຍານພາຫະນະຂົນສົ່ງທາງບົກທີ່ຜ່ານແດນ ລະຫ່ວາງ ລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແລະ ລັດຖະບານແຫ່ງສາທາລະນະລັດສັງຄົມນິຍົມຫວຽດນາມ

==========

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ (ຕໍ່ໄປນີ້ເອີ້ນວ່າ "ສອງຝ່າຍ");

ອີງຕາມສັນຍາ ວ່າດ້ວຍ ການອຳນວຍຄວາມສະດວກ ໃຫ້ແກ່ຍານພາຫະນະຂົນສົ່ງທາງບົກ ທີ່ຜ່ານແດນ ລະຫ່ວາງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ທີ່ໄດ້ລົງນາມ ເມື່ອວັນທີ 23/04/2009 ທີ່ ຮ່າໂນ້ຍ (ຕໍ່ໄປເອີ້ນວ່າ" ສັນຍາ").

ໄດ້ຕົກລົງນຳກັນດັ່ງລຸ່ມນີ້:

ພາກທີ I
ການຂຶ້ນທະບຽນ ແລະ ການກຳນົດ ເຄື່ອງໝາຍ ຍານພາຫະນະຂົນສົ່ງ ຂອງແຕ່ລະປະເທດ

ມາດຕາ 1: ພັນທະໃນການຂຶ້ນທະບຽນຍານພາຫະນະ

ຍານພາຫະນະຂົນສົ່ງທາງບົກ (ຊຶ່ງຕໍ່ໄປເອີ້ນຫຍໍ້ວ່າ ຍານພາຫະນະ) ທີ່ນຳໃຊ້ໃນ ການຂົນສົ່ງທາງບົກ ແລະ ຜ່ານໄປມາ ລະຫວ່າງ ສອງຝ່າຍ ຕ້ອງຂຶ້ນທະບຽນໃນປະເທດ ຂອງຕົນ ໂດຍສອດຄ່ອງ ກັບຂໍ້ກຳນົດໃນ ອະນຸສັນຍາສະບັບນີ້.

ມາດຕາ 2: ການນຳໃຊ້ພາສາ ແລະ ຕົວເລກ.

ບັນດາຂໍ້ມູນລະອຽດທີ່ຂຽນໃນໃບທະບຽນລົດ ແລະ ປ້າຍລົດ ໃຫ້ຂຽນເປັນພາສາ ອັງກິດ (ຂຽນເປັນຕົວພິມໃຫ່ຍ ຫຼື ຫ້ານະດາ) ເປັນຕົວເລກອາລັບ. ການນຳໃຊ້ພາສາ ອັງກິດ ແລະ ຕົວເລກ ອາລັບ ບໍ່ຂັດກັບການນຳໃຊ້ພາສາຂອງຊາດ.

ມາດຕາ 3: ໃບທະບຽນຍານພາຫະນະ.

ຍານພາຫະນະທຸກປະເພດທີ່ດຳເນີນການຂົນສົ່ງ ລະຫວ່າງ ສອງປະເທດນັ້ນ ຕ້ອງ ມີໃບທະບຽນທີ່ຖືກຕ້ອງ ຊຶ່ງອອກໃຫ້ ໂດຍອົງການລັດ ທີ່ມີສິດອຳນາດອະນຸມັດ ຂອງ ປະເທດເຈົ້າຂອງ ຍານພາຫານະ ແລະ ຕ້ອງມີລາຍການດັ່ງລຸ່ມນີ້:

1). ຂໍ້ມູນພື້ນຖານ.

ກ. ຫົວຂໍ້: ໃບທະບຽນຍານພາຫະນະ;

ຂ. ຊື່ ອົງການອະນຸມັດ;

ຄ. ການອ້າງອີງ (ລາຍເຊັນ ແລະ ການປະທັບ);

ງ. ວັນ, ເດືອນ, ປີ ຂຶ້ນທະບຽນຍານພາຫະນະ.

2). ລາຍລະອຽດກ່ຽວກັບການຂຶ້ນທະບຽນ.

ກ. ເລກທະບຽນ;

ຂ. ວັນ, ເດືອນ, ປີ ຂຶ້ນທະບຽນ ຄັ້ງທຳອິດ;

ຄ. ອາຍຸການນຳໃຊ້ຂອງໃບທະບຽນ (ຖ້າມີ).

3). ຂໍ້ມູນກ່ຽວກັບເຈົ້າຂອງຍານພາຫະນະ.

ກ. ຊື່ ແລະ ນາມສະກຸນ

ຂ. ທີ່ຢູ່

4). ລາຍລະອຽດຂອງຍານພາຫະນະ.

ກ. ປະເພດລົດ: ລົດບັນທຸກ, ລົດບັສ ແລະ ອື່ນໆ

ຂ. ຕົວລົດ.

ຂ.1 ຍີ່ຫໍ້;

ຂ.2 ລຸ້ນ;

ຂ.3 ສີລົດ;

ຂ.4 ປີຜະລິດ (ຖ້າມີ);

ຂ.5 ຂະໜາດ: ລວງຍາວ(ມ) ; ລວງກ້ວາງ (ມ), ລວງສູງ (ມ);

ຂ.6 ເລກຖັງ;

ຂ.7 ຈຳນວນເພົາ;

ຂ.8 ນ້ຳໜັກລົດເປົ່າ : ສຳລັບລົດບັນທຸກສິນຄ້າ ຫຼື ລົດໂດຍສານ;

ຂ.9 ຂະໜາດບັນທຸກ: (ສຳລັບລົດບັນທຸກ): ຂົນສົ່ງສິນຄ້າ.....Kg ;
(ສຳລັບລົດໂດຍສານ): ຈຳນວນບ່ອນນັ່ງ / ບ່ອນນອນ/ບ່ອນຢືນ,

ຄ. ເຄື່ອງຈັກ.

ຄ.1 ຍີ່ຫໍ້ຂອງຈັກ (ຖ້າແຕກຕ່າງກັບຕົວລົດ);

ຄ.2 ຈຳນວນລູກສູບ;

ຄ.3 ແຮງມ້າ;

ຄ.4 ເລກຈັກ.

ມາດຕາ 4: ປ້າຍລົດ.

ຍານພາຫະນະທຸກປະເພດທີ່ເຮັດການຂົນສົ່ງ ເຂົ້າ-ອອກ ຕາມດ່ານຊາຍແດນ ລະຫວ່າງ ສອງປະເທດ ຕ້ອງມີປ້າຍຕາມຂໍ້ກຳນົດຂອງປະເທດນັ້ນ, ລົດພວງ ແລະ ຫາງລາກ ກໍ່ຕ້ອງ ມີປ້າຍເຊັ່ນດຽວກັນ ແລະ ຕິດຢູ່ທ້າຍລົດ, ປ້າຍລົດ ຕ້ອງສາມາດອ່ານ ໄດ້ໃນໄລຍະຫ່າງ 35-40 ມ ແລະ ປ້າຍລົດ ອາດມີສີສະທ້ອນແສງກໍ່ໄດ້.

ມາດຕາ 5: ເຄື່ອງໝາຍຈຳແນກປະເທດ.

ເຄື່ອງໝາຍຈຳແນກປະເທດເປັນຕົວໜັງສືລາຕິນໃຫ່ຍມີ ຈຳນວນ 01-03 ຕົວໜັງສື ມີລວງສູງ 0.08ມ, ລວງກ້ວາງ ຢ່າງໜ້ອຍ 0.01ມ. ຕົວໜັງສືດຳ ພື້ນສີຂາວ ເປັນຮູບໄຂ່.

ເຄື່ອງໝາຍຈຳແນກປະເທດກຳນົດດັ່ງລຸ່ມນີ້:

ກ. ສຳລັບລົດ ສປປ ລາວ ຕິດເຄື່ອງໝາຍ : **LAO**

ຂ. ສຳລັບລົດ ສສ ຫວຽດນາມ ຕິດເຄື່ອງໝາຍ : **VN –**

ເຄື່ອງໝາຍຈຳແນກປະເທດ ຕ້ອງຕິດໃສ່ ແວ່ນດ້ານໜ້າເບື້ອງເທິງກ້ຳຂວາມື ຂອງຜູ້ຂັບລົດ.

ມາດຕາ 6: ການຮັບຮູ້ ຊຶ່ງກັນ ແລະ ກັນ

ທັງສອງຝ່າຍຮັບຮູ້ໃບທະບຽນ ແລະເອກະສານທະບຽນຍານພາຫະນະ, ໃບຢັ້ງຢືນກວດກາ ເຕັກນິກຍານພາຫະນະ,ສະຕິກເກີເຕັກນິກ,ໃບອະນຸຍາດຂັບຂີ່ຍານພາຫານະ,ປຶ້ມຫຼືໃບອະ ນຸຍາດລົດຂົນສົ່ງລະຫວ່າງປະເທດອອກໃຫ້ ໂດຍອີງການລັດທີ່ມີສິດອຳນາດຂອງຝ່າຍໃດ ໜຶ່ງ.

ພາກທີ II

ລະບຽບການ ສຳລັບຍານພາຫະນະ

ມາດຕາ 7: ຫຼັກການລວມ

1. ຍານພາຫະນະຂົນສົ່ງ ທີ່ເຮັດທຸລະກິດ ແລະ ບໍ່ເຮັດທຸລະກິດ ທີ່ມີເງື່ອນໄຂຄົບຖ້ວນ ຕາມສັນຍາ ແລະ ອະນຸສັນຍາ ຈຶ່ງຈະໄດ້ຮັບອະນຸຍາດ ເຂົ້າ-ອອກ ຕາມດ່ານ ຊາຍ ແດນ ລະຫວ່າງ ລາວ ແລະ ຫວຽດນາມ ທີ່ໄດ້ກຳນົດໃນມາດຕາ 30 ຂອງ ອະນຸ ສັນຍາສະບັບນີ້.

2. ຍານພາຫະນະຂົນສົ່ງ ຈະໄດ້ຮັບອະນຸຍາດ ເຂົ້າ-ອອກ ຊົ່ວຄາວ ໃນປະເທດຄູ່ສັນຍາ ກຳນົດບໍ່ເກີນ 30 ວັນ/ຖ້ຽວ ແລະ ຕໍ່ອະນຸຍາດໄດ້ບໍ່ເກີນ 10 ວັນ ໃນກໍລະນີບໍ່ສາມາດ ກັບຄືນ ປະເທດຂອງຕົນ ຕາມກຳນົດ ຫາກມີເຫດຜົນຈະແຈ້ງ ຈຶ່ງຈະໄດ້ ຮັບການພິ ຈາລະນາຕໍ່ອາຍຸ. ພະແນກໂຍທາທິການແລະຂົນສົ່ງ ທ້ອງຖິ່ນ (ບ່ອນຍານພາ ຫະນະ ເກີດເຫດການ) ຈະເປັນຜູ້ຕໍ່ອາຍຸໃຫ້, ການກັບຄືນ ສາມາດຜ່ານຄູ່ດ່ານທີ່ໃກ້ທີ່ສຸດ.

3. ຍານພາຫະນະ ທີ່ເຮັດທຸລະກິດ ຈະໄດ້ຮັບອະນຸຍາດການຂົນສົ່ງ ລະຫວ່າງປະເທດ ລາວ-ຫວຽດນາມ ລວມມີ:
   ກ. ລົດໂດຍສານປະຈຳທາງ;
   ຂ. ລົດຂົນສົ່ງຜູ້ໂດຍສານ ແບບເຊົ່າເໝົາຕາມສັນຍາ ແລະ ລົດຂົນສົ່ງນັກທ່ອງທ່ຽວ;
   ຄ. ລົດຂົນສົ່ງສິນຄ້າ;
   ງ. ລົດຂົນສົ່ງພາຍໃນຂອງວິສາຫະກິດ ແລະ ຂົນສົ່ງຮັບໃຊ້ບັນດາກິດຈະກຳພາຍໃນ, ລົດໂຄງການ, ການເຄື່ອນໄຫວທຸລະກິດ ຊຶ່ງວິສະຫະກິດ ດຳເນີນ ດ້ວຍຕົນເອງ

4. ລົດຂົນສົ່ງທີ່ບໍ່ເຮັດທຸລະກິດ ທີ່ໄດ້ຮັບໃບອະນຸຍາດຂົນສົ່ງຜ່ານແດນ ລວມມີ:
   ກ. ຍານພາຫະນະ ທາງລັດຖະການ;
   ຂ. ຍານພາຫະນະສ່ວນບຸກຄົນ ທີ່ໄປຢ້ຽມຢາສ່ວນຕົວ, ແມ່ນຍານພາຫະນະຂົນສົ່ງຄົນ ທີ່ມີບ່ອນນັ່ງຕ່ຳກ່ວາ 9 ບ່ອນນັ່ງ ແລະ ລົດກະບະ;
   ຄ. ຍານພາຫະນະ ຂອງການຈັດຕັ້ງທາງການທູດ, ການຈັດຕັ້ງສາກົນ.
   ງ. ລົດດັບເພີງ, ລົດຊ່ວຍເຫຼືອ, ລົດກູ້ໄພອຸປະຕິເຫດ,ລົດທີ່ປະຕິບັດວຽກງານມະນຸດ ສະທຳ.

5. ຍານພາຫະນະຂົນສົ່ງທາງບົກທີ່ກ່າວໃນອະນຸສັນຍາສະບັບນີ້ແມ່ນຍານພາຫະນະທີ່ ມີລະບົບພວງມະໄລຊ້າຍ.

6. ຍານພາຫະນະ ທີ່ເຮັດທຸລະກິດດ້ານການຂົນສົ່ງ ຕ້ອງມີອາຍຸການນຳໃຊ້ສອດຄ່ອງ ກັບ ຂໍ້ກຳນົດກົດໝາຍ ຂອງແຕ່ລະປະເທດ.

7. ຍານພາຫະນະທຸກປະເພດ ທີ່ຜ່ານໄປມາ ຕາມດ່ານຊາຍແດນ ຕ້ອງມີປະກັນໄພບັງຄັບ ຄວາມຮັບຜິດຊອບທາງແພ່ງສຳລັບບຸກຄົນທີ່ສາມ ໂດຍສອດຄ່ອງກັບບັນດາ ຂໍ້ກຳນົດຂອງປະເທດເຈົ້າພາບ.

ມາດຕາ 8: ເອກະສານລົດ

1. ບັນດາເອກະສານທີ່ຕ້ອງຕິດໄປນຳລົດ ລວມມີດັ່ງລຸ່ມນີ້:

ກ. ສຳລັບ ຍານພາຫະນະຂົນສົ່ງໂດຍສານ.

ກ.1. ໃບທະບຽນລົດ;

ກ.2. ໃບຢັ້ງຢືນກວດກາເຕັກນິກລົດ;

ກ.3. ປຶ້ມ ຫຼື ໃບອະນຸຍາດລົດຂົນສົ່ງລະຫວ່າງປະເທດ.

ກ.4. ບັນຊີລາຍຊື່ຜູ້ໂດຍສານ ທີ່ເດີນທາງໄປນຳລົດໂດຍໃຫ້ມີການຢັ້ງຢືນ ຈາກສະຖານີ (ສຳລັບລົດໂດຍສານປະຈຳທາງ), ໃຫ້ຢັ້ງຢືນຈາກຫົວໜ້າ ສຳນັກງານ ຫຼື ຫົວໜ້າໜ່ວຍງານ ທີ່ດຳເນີນທຸລະກິດການຂົນສົ່ງ ແລະ ການທ່ອງທ່ຽວ(ສຳລັບການຂົນສົ່ງນັກທ່ອງທ່ຽວ, ລົດຕາມສັນຍາ);

ກ.5. ໃບປະກັນໄພພາກບັງຄັບຄວາມຮັບຜິດຊອບບຸກຄົນທີ່ສາມທີ່ມີອາຍຸການນຳໃຊ້;

ກ.6. ໃບປະກັນໄພ ຜູ້ໂດຍສານ ທີ່ຍັງມີອາຍຸການນຳໃຊ້;

ກ.7. ໃບແຈ້ງພາສີ ເຂົ້າ-ອອກ ຊົ່ວຄາວ ຂອງຍານພາຫະນະຂົນສົ່ງທາງບົກ.

ຂ. ສຳລັບ ຍານພາຫະນະຂົນສົ່ງສິນຄ້າ

ຂ.1. ໃບທະບຽນລົດ;

ຂ.2 . ໃບຢັ້ງຢືນການກວດເຕັກນິກລົດ;

ຂ.3 . ປຶ້ມ ຫຼື ໃບອະນຸຍາດລົດຂົນສົ່ງລະຫວ່າງປະເທດ;

ຂ.4 . ໃບນຳສົ່ງສິນຄ້າ;

ຂ.5 . ໃບແຈ້ງພາສີສຳລັບສິນຄ້າ;

ຂ.6 . ໃບປະກັນໄພ ບຸກຄົນທີ່ສາມ ທີ່ມີອາຍຸການນຳໃຊ້;

ຂ.7 . ໃບແຈ້ງພາສີການ ເຂົ້າ-ອອກ ຊົ່ວຄາວ ຂອງຍານພາຫະນະຂົນສົ່ງທາງບົກ.

ຂ.8 ໃບຢັ້ງຢືນກວດກາ ພືດ/ສັດ (ກໍລະນີ ສິນຄ້າກະສິກຳ).

ຄ. ສຳລັບ ຍານພາຫະນະອື່ນໆ

ຄ.1 . ໃບທະບຽນລົດ;

ຄ.2 . ໃບຢັ້ງຢືນການກວດເຕັກນິກລົດ;

ຄ.3 . ປຶ້ມ ຫຼື ໃບອະນຸຍາດລົດຂົນສົ່ງລະຫວ່າງປະເທດ;

ຄ.4 . ໃບປະກັນໄພບຸກຄົນທີ່ສາມ ທີ່ມີອາຍຸການນຳໃຊ້;

ຄ.5. ໃບແຈ້ງພາສີ ການເຂົ້າ-ອອກ ຊົ່ວຄາວ ຂອງຍານພາຫະນະຂົນສົ່ງທາງບົກ.

2. ເອກະສານທີ່ກ່າວມາໃນຂ້າງເທິງນີ້ຈະຕ້ອງໄດ້ແປເປັນພາສາອັງກິດ ຫຼືແປເປັນພາສາ ຂອງປະເທດທີ່ຕົນຈະໄປ ໂດຍມີການຢັ້ງຢືນ ແລະ ຕິດຕົວໄປນຳຕະຫຼອດໄລຍະການ ເຄື່ອນໄຫວໃນ ດິນແດນທີ່ຕົນຈະໄປ ເພື່ອສາມາດແຈ້ງຕໍ່ເຈົ້າໜ້າທີ່ເມື່ອຖືກຮຽກຮ້ອງ.

ມາດຕາ 9: ປຶ້ມ ຫຼື ໃບອະນຸຍາດລົດຂົນສົ່ງລະຫວ່າງປະເທດ

1. ຍານພາຫະນະທຸກຄັນ ທີ່ຂຶ້ນທະບຽນຢູ່ປະເທດຄູ່ສັນຍາຝ່າຍໜຶ່ງເມື່ອເຂົ້າໄປດິນແດນຂອງ ຂອງປະເທດຄູ່ສັນຍາອີກຝ່າຍໜຶ່ງຈະຕ້ອງມີປຶ້ມຫຼືໃບອະນຸຍາດລົດຂົນສົ່ງລະຫວ່າງປະເທດ ຊຶ່ງອອກໃຫ້ໂດຍອົງການທີ່ມີສິດອຳນາດ ຂອງປະເທດ ເຈົ້າຂອງຍານພາຫະນະ.
2. ສຳລັບລົດໂດຍສານປະຈຳທາງ, ອົງການທີ່ມີສິດອອກໃບອະນຸຍາດ ຕ້ອງຂຽນແຈ້ງ ຊື່ຄູ່ດ່ານ ເຂົ້າ-ອອກ, ຈຸດຕົ້ນທາງ-ປາຍທາງຂອງລົດປະຈຳທາງດັ່ງກ່າວພ້ອມ ເສັ້ນທາງຂົນສົ່ງ ທີ່ ອະ ນຸຍາດໃຫ້ເຄື່ອນໄຫວ.
3. ສຳລັບລົດສ່ວນບຸກຄົນ ໄປເຮັດວຽກສ່ວນຕົວ, ອົງການລັດທີ່ມີສິດອຳນາດອອກ ປຶ້ມຫຼືໃບອະ ນຸຍາດຂົນສົ່ງ ລະຫວ່າງປະເທດ ຕ້ອງຂຽນແຈ້ງ ຊື່ ແລະນາມສະກຸນ, ທີ່ຢູ່ ຂອງເຈົ້າຂອງລົດ.
4. ສອງຝ່າຍຕ້ອງແຈ້ງ ລາຍຊື່ວິສາຫະກິດຂົນສົ່ງທີ່ເຮັດທຸລະກິດ ໃຫ້ກັນຊາບ, ໃນກໍລະນີ ອົງການ ລັດທີ່ມີສິດອຳນາດຂອງຝ່າຍໃດໜຶ່ງບໍ່ຮັບຮອງໃຫ້ວິສາຫະກິດ ຫຼື ຍານພາຫະນະຂອງອີກຝ່າຍ ໜຶ່ງ ເຂົ້າຮ່ວມໃນການຂົນສົ່ງ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ.
5. ການຂົນສົ່ງນັກທ່ອງທ່ຽວຕ້ອງ ເຂົ້າ-ອອກ ຕາມຄູ່ດ່ານສາກົນ.

ມາດຕາ 10: ແບບຟອມ ປຶ້ມ ຫຼື ໃບອະນຸຍາດລົດຂົນສົ່ງ ລະຫວ່າງປະເທດ

1. ປຶ້ມ ຫຼື ໃບອະນຸຍາດລົດຂົນສົ່ງ ລະຫວ່າງປະເທດ ລວມມີ:

ກ. ປຶ້ມ ຫຼື ໃບອະນຸຍາດລົດຂົນສົ່ງລະຫວ່າງປະເທດ.

ຂ. ເຄື່ອງໝາຍບອກປະເທດທີ່ຕິດໃສ່ຍານພາຫະນະຂົນສົ່ງລະຫວ່າງປະເທດ. ປຶ້ມ ຫຼື ໃບອະ ນຸຍາດລົດຂົນສົ່ງລະຫວ່າງປະເທດ ຕ້ອງພິມເປັນສອງພາສາ: ພາສາອັງກິດ ແລະ ພາສາ ຊາດ (ພາສາລາວ ຫຼື ພາສາຫວຽດນາມ). ປຶ້ມ ຫຼື ໃບອະນຸຍາດຂອງປະເທດໃດ ໃຫ້ພິມ ພາສາຂອງຕົນຢູ່ເທິງ ແລະ ພາສາອັງກິດຢູ່ລຸ່ມ, ແບບຟອມປຶ້ມ ຫຼື ໃບອະນຸຍາດລົດຂົນສົ່ງ ລະຫວ່າງປະເທດ ໃຫ້ເອົາຕາມຂໍ້ກຳນົດຂອງໃບຊ້ອນທ້າຍ.

2. ອາຍຸການນຳໃຊ້ ປຶ້ມ ຫຼື ໃບອະນຸຍາດລົດຂົນສົ່ງ ລະຫວ່າງປະເທດ ອອກໃຫ້ແກ່ ຍານພາຫະນະທີ່ເຮັດທຸລະກິດ ທີ່ເຂົ້າອອກຫຼາຍເທື່ອ ມີອາຍຸນຳໃຊ້ 1 ປີ, ສຳລັບໃບອະນຸຍາດຂົນສົ່ງ ທີ່ອອກອະນຸຍາດໃຫ້ແກ່ ຍານພາຫະນະຂົນສົ່ງໂດຍສານ ຕາມແບບເຊົ່າເໝົາ ແລະ ການຂົນສົ່ງນັກທ່ອງທ່ຽວ ແມ່ນອາດຈະອອກໃຫ້ເປັນຄັ້ງໆ, ແຕ່ກຳນົດເວລາບໍ່ເກີນ 30 ວັນ.
3. ອາຍຸການນຳໃຊ້ ປຶ້ມ ຫຼື ໃບອະນຸຍາດລົດຂົນສົ່ງ ລະຫວ່າງປະເທດທີ່ອອກໃຫ້ຍານພາຫະນະຂົນສົ່ງທີ່ບໍ່ເຮັດທຸລະກິດແມ່ນບໍ່ເກີນ 30 ວັນ, ສະເພາະ ລົດທາງລັດຖະການ, ທາງການທູດ, ການຈັດຕັ້ງສາກົນ ແມ່ນເກີນ 1 ປີ ນັບແຕ່ມື້ອອກອະນຸຍາດ.

ພາກທີ III

ການນຳເຂົ້າ ແລະ ນຳອອກ ຊົ່ວຄາວ ຂອງຍານພາຫະນະ

ມາດຕາ 11 : ການງົດເກັບພາສີ ແລະ ພັນທະອື່ນໆ.

ສອງຝ່າຍ ເຫັນດີອະນຸມັດໃຫ້ ຍານພາຫະນະທີ່ໄດ້ຂຶ້ນທະບຽນ ໃນປະເທດຄູ່ສັນຍາ ສາມາດເຂົ້າຊົ່ວຄາວໃນປະເທດຕົນໄດ້,ໂດຍບໍ່ຕ້ອງເສຍພາສີນຳເຂົ້າ ແລະ ບໍ່ໃຫ້ມີຂໍ້ເກືອດຫ້າມ ຫຼື ຂໍ້ຈຳກັດໃດໆອີກ, ແຕ່ຕ້ອງໄດ້ນຳອອກຄືນ ແລະ ໃຫ້ປະຕິບັດຕາມຂັ້ນຕອນເງື່ອນໄຂ ອື່ນໆທີ່ໄດ້ກຳນົດໃນອະນຸສັນຍາ ສະບັບນີ້.

ມາດຕາ 12: ການງົດເກັບພາສີສຳລັບລາຍການອື່ນໆ.

ເຄື່ອງອຸປະກອນປ່ຽນຖ່າຍ, ເຄື່ອງມືສ້ອມແປງ ແລະເຄື່ອງລາຍການອື່ນໆທີ່ເປັນອຸປະກອນຈຳເປັນສຳລັບຍານພາຫະນະຂົນສົ່ງແລະນ້ຳມັນໃນຖັງ,ນ້ຳມັນເຄື່ອງສຳລັບປ່ຽນຖ່າຍລວມທັງເຄື່ອງອາໄຫຼ່ໃນຈຳນວນຈຳເປັນສຳລັບການປ່ຽນຖ່າຍສະເພາະລົດໃນຖັ້ວເດີນທາງ ຊຶ່ງລາຍການເຄື່ອງດັ່ງກ່າວຈະຕ້ອງໄດ້ຖືກຍົກເວັ້ນການເກັບພາສີ, ແຕ່ຕ້ອງແຈ້ງໃນເອກະສານນຳເຂົ້າຊົ່ວຄາວ.

ມາດຕາ 13: ການ ນຳອອກຄືນ.

1. ຍານພາຫະນະທີ່ນຳເຂົ້າໃນປະເທດຄູ່ສັນຍາ,ຕ້ອງໄດ້ນຳອອກຄືນຕາມກຳນົດເວລາອະນຸມັດ ດ້ວຍສະພາບເດີມ ຫຼື ຕ່າງຈາກເດີມ ແຕ່ມີເຫດຜົນພຽງພໍ, ໃນກໍລະນີສະພາບລົດ ຕ່າງຈາກສະພາບເດີມ ແບບບໍ່ສົມເຫດສົມຜົນໃຫ້ຖືວ່າເປັນການນຳລົດເຂົ້າປະເທດຄູ່ສັນຍາບໍ່ຖືກຕ້ອງ ແລະຈະໄດ້ແກ້ໄຂຕາມລະບຽບກົດໝາຍ, ຂໍ້ກຳນົດຂອງປະເທດຄູ່ສັນຍາຝ່າຍນັ້ນ.
2. ອາໄຫຼ່ຕ່າງໆທີ່ຍັງບໍ່ທັນໄດ້ນຳໃຊ້ ຫຼື ອາໄຫຼ່ທີ່ເປ່ເພ ຂອງຍານພາຫະນະທີ່ນຳເຂົ້າຊົ່ວຄາວນັ້ນ ກໍ່ຕ້ອງໄດ້ນຳອອກຄືນ.
3. ຍານພາຫະນະ ທີ່ຖືກເປ່ເພໜັກ ຍ້ອນອຸປະຕິເຫດ ຈະບໍ່ໄດ້ນຳອອກຄືນ ຕາມລະບຽບກົດໝາຍຂອງປະເທດຄູ່ສັນຍາ, ໃນເງື່ອນໄຂດັ່ງນີ້:

ກ. ໃນເມື່ອໄດ້ເສຍພາສີອາກອນນຳເຂົ້າ ຍານພາຫະນະຄັນດັ່ງກ່າວ;

ຂ. ຍານພາຫະນະທີ່ຖືກຍຸບ ໂດຍອົງການລັດ ທີ່ມີສິດອຳນາດ ຂອງ ຄູ່ສັນຍາຝ່າຍ ນັ້ນຮັບຮອງ;

ຄ. ຍານພາຫະນະ ທີ່ຖືກຍຸບພາຍໃຕ້ການຕິດຕາມ ໂດຍອົງການລັດທີ່ມີສິດອຳນາດ ຂອງ ຄູ່ສັນຍາຝ່າຍນັ້ນ, ສ່ວນຄ່າໃຊ້ຈ່າຍ ແມ່ນຜູ້ດຳເນີນເອກະສານລົດ ນຳເຂົ້າ ຊື່ວຄາວຮັບຜິດຊອບ ແລະ ອາໄຫຼ່ທີ່ຍັງໃຊ້ການໄດ້ຕ້ອງໄດ້ນຳອອກຄືນຫຼືຕ້ອງໄດ້ ຈ່າຍຄ່າພາສີອາກອນນຳເຂົ້າ.

ມາດຕາ 14: ຫຼັກຖານນຳເຂົ້າ ແລະ ນຳອອກຄືນ.

ຫຼັກຖານການນຳເຂົ້າ ແລະ ນຳອອກຄືນ ຂອງ ຍານພາຫະນະທາງບົກ ຈະໄດ້ຂຽນໃນ ໃບແຈ້ງພາສີນຳເຂົ້າ ແລະ ນຳອອກຄືນ ຂອງຍານພາຫະນະ ຢູ່ສະຖານທີ່ກວດກາປະຈຳ ດ່ານຊາຍແດນ.

ສຳລັບລົດໂດຍສານແລະລົດຂົນສົ່ງນັກທ່ອງທ່ຽວເມື່ອຜ່ານດ່ານຊາຍແດນ,ຜູ້ຂັບລົດ ຕ້ອງເອົາບັນຊີລາຍຊື່ຜູ້ໂດຍສານທີ່ໄປນຳລົດ ແຈ້ງໃຫ້ເຈົ້າໜ້າທີ່ປະຈຳດ່ານຊາຍແດນ.

ສຳລັບລົດບັນທຸກສິນຄ້າ ຜູ້ຂັບລົດ ຕ້ອງແຈ້ງລາຍການສິນຄ້າ ທີ່ຂົນສົ່ງໄປນຳ ລົດໃຫ້ ເຈົ້າ ໜ້າທີ່ປະຈຳດ່ານຊາຍແດນ.

ພາກທີ IV

ລະບຽບການສຳລັບຄົນ ເຂົ້າ-ອອກ ຜ່ານດ່ານຊາຍແດນ

ມາດຕາ 15: ເອກະສານຂອງຄົນ ທີ່ ເຂົ້າ-ອອກ ຜ່ານດ່ານຊາຍແດນ

ຜູ້ຂັບລົດ,ພະນັກງານປະຈຳລົດ ແລະ ຜູ້ໂດຍສານ ທີ່ຜ່ານໄປມາຕາມດ່ານຊາຍແດນ ລະຫວ່າງ ສອງປະເທດ ຕ້ອງຖືເອກະສານ ຄືດັ່ງລຸ່ມນີ້:

1. **ສຳລັບຜູ້ຂັບລົດ**

ກ. ໜັງສືຜ່ານແດນ ຫຼື ໜັງສືອື່ນໆ ທີ່ມີຄຸນຄ່າປ່ຽນແທນ ໜັງສືຜ່ານແດນ ອອກໃຫ້ ໂດຍປະເທດຕົນ;

ຂ. ໃບຂັບຂີ່ຍານພາຫະນະພົນລະເຮືອນ (ຫຼືໃບຂັບຂີ່ສາກົນ) ທີ່ມີອາຍຸນຳໃຊ້ ;

ຄ. ບັດພັກເຊົາຊົ່ວຄາວ, ບັດແຮງງານ ຫຼື ບັດປະຈຳຕົວນັກການທູດ ທີ່ມີອາຍຸນຳໃຊ້ 1 ປີ ຂຶ້ນໄປອອກໃຫ້ໂດຍ ປະເທດເຈົ້າຂອງຍານພາຫະນະ, ໃນກໍລະນີໜັງສືຜ່ານແດນຂອງ ຜູ້ຂັບລົດ ແລະ ໃບທະບຽນລົດ ບໍ່ແມ່ນສັນຊາດດຽວກັນອອກໃຫ້,

2. ສຳລັບຜູ້ໂດຍສານ ແລະ ພະນັກງານປະຈຳລົດ

ຕ້ອງມີໜັງສືຜ່ານແດນ ຫຼື ໜັງສືອື່ນໆ ທີ່ມີຄຸນຄ່າປ່ຽນແທນໜັງສືຜ່ານແດນອອກໃຫ້ໂດຍປະເທດຕົນ;ໃນກໍລະນີ ຄົນທີ່ມາຈາກປະເທດທີ່ສາມ ອາດມີວີຊາ.

ມາດຕາ 16: ການກວດກາສຸຂະອະນາໄມ ສຳລັບຄົນ.

1. ຫຼັກການລວມ:ຄູ່ສັນຍາຈະນຳໃຊ້ລະບຽບກົດໝາຍຂອງປະເທດຕົນໂດຍສອດຄ່ອງກັບລະບຽບການສາກົນ ຂອງອົງການ ອານາໄມໂລກ (WHO);
2. ບຸກຄົນທີ່ ຈະບໍ່ຖືກກວດກາ ສຸກຂະອະນາໄມ ໃນກໍລະນີ ດັ່ງນີ້:

ກ. ບຸກຄົນທີ່ມີ ບັນດາເອກະສານ ບັນທຶກການກວດກາ ຕາມຂໍ້ກຳນົດ ຂອງອົງການອານາໄມໂລກ (WHO)

ຂ. ບໍ່ມາຈາກ ແລະ ບໍ່ໄປຜ່ານເຂດພະຍາດລະບາດ ຫຼື ເຂດທີ່ບໍ່ມີຄວາມສ່ຽງ;

ຄ. ບໍ່ມີປະກົດການ ພະຍາດຕິດແປດ ທີ່ເປັນອັນຕະລາຍໃຫ້ແກ່ສຸຂະພາບໃຫ້ຊຸມຊົນ.

3. ບຸກຄົນທີ່ຜ່ານໄປມາຕາມ ມາດຕາ 16 ຈະຖືກກວດກາ ໃນກໍລະນີ ດັ່ງນີ້:

ກ. ຜູ້ທີ່ ບໍ່ມີການຢັ້ງຢືນເອກະສານການແພດ ຕາມຂໍ້ກຳນົດ ຂອງອົງການອານາໄມໂລກ (WHO);

ຂ. ຜູ້ທີ່ມາຈາກ ຫຼື ຜູ້ທີ່ຜ່ານເຂດທີ່ມີການລະບາດພະຍາດ ຫຼື ເຂດທີ່ມີຄວາມສ່ຽງ;

ຄ. ຜູ້ທີ່ມີອາການ ບັນດາພະຍາດຕິດແປດຊຶ່ງຈະເປັນພິນຮຸນແຮງ ເປັນອັນຕະລາຍ ຕໍ່ສຸຂະພາບຊຸມຊົນ.

4. ການແກ້ໄຂເມື່ອກວດພົບບຸກຄົນ ທີ່ມີພະຍາດຕິດເຊື້ອ:

ບຸກຄົນໃດກໍ່ຕາມ ເມື່ອກວດພົບມີເຊື້ອພະຍາດຕິດແປດ, ອົງການລັດ ທີ່ມີສິດອຳນາດທີ່ກ່ຽວຂ້ອງ ຈະຕ້ອງດຳເນີນການ ດັ່ງນີ້:

ກ. ອາດປະຕິເສດ ການອະນຸຍາດໃຫ້ບຸກຄົນທີ່ເປັນຄົນຕ່າງປະເທດນັ້ນ ໃຫ້ເຂົ້າໃນດິນແດນ ແລະ ໃຫ້ກັບຄືນສູ່ປະເທດຕົນ;

ຂ. ມາດຕະການບັງຄັບນຳໃຊ້ການສັກຢາກັນພະຍາດ ຫຼື ມາດຕະການອັນເໝາະສົມຕາມຂໍ້ກຳນົດຂອງ ອົງການອານາໄມໂລກ (WHO);

ຄ. ໃນກໍລະນີ ສະພາບສຸຂະພາບຂອງຜູ້ຖືກກວດກາ ບໍ່ສາມາດເດີນທາງຕໍ່ໄປໄດ້ນັ້ນຈະໄດ້ດຳເນີນການບົວລະບັດປິ່ນປົວ ໃນເຂດຫວງຫ້າມຢ່າງເໝາະສົມ;

ງ. ຕ້ອງແຈ້ງການດ່ວນ ໄປຍັງ ອົງການອານາໄມໂລກ (WHO) ໂດຍຜ່ານຄົ້ນວິທະຍຸ ອັນເໝາະສົມຕາມລະບຽບໃນປະຈຸບັນ;

ມາດຕາ 17: ການກວດກາອານາໄມ ລະບາດວິທະຍາ ສຳລັບເຄື່ອງຕິດຕາມສ່ອນຕົວ.

ອົງການລັດທີ່ມີສິດອຳນາດ ຂອງສອງປະເທດ ຈະຕ້ອງປະຕິບັດຕາມລະບຽບກົດໝາຍຂອງ ປະເທດຄູ່ສັນຍາ ແລະ ຂໍ້ຕົກລົງ ຫຼື ສົນທິສັນຍາສາກົນ ຊຶ່ງສອງຝ່າຍໄດ້ເຂົ້າເປັນພາຄີ.

ພາກທີ V
ເງື່ອນໄຂສຳລັບວິສາຫະກິດຂົນສົ່ງ

ມາດຕາ 18: ໃບອະນຸຍາດການຂົນສົ່ງລະຫວ່າງປະເທດ.

1. ບັນດາວິສາຫະກິດ,ສະຫະກອນທີ່ໄດ້ສ້າງຕັ້ງຂຶ້ນ ຕາມຂໍ້ກຳນົດກົດໝາຍຂອງລາວ ແລະ ຫວຽດນາມນັ້ນທີ່ມີເງື່ອນໄຂພຽງພໍຕາມຂໍ້ກຳນົດໃນມາດຕາ19 ຈຶ່ງໄດ້ຮັບການອະນຸຍາດ ໃຫ້ເຮັດການຂົນສົ່ງ ລະຫ່ວາງປະເທດ ເພື່ອເຄື່ອນໄຫວ ດຳເນີນການຂົນສົ່ງ ລະຫ່ວາງ ລາວ-ຫວຽດນາມ:
2. ແບບຟອມໃບອະນຸຍາດລົດຂົນສົ່ງລະຫວ່າງປະເທດ ແມ່ນ ອົງການທີ່ມີສິດອຳນາດຂອງ ຄູ່ສັນຍາເປັນຜູ້ກຳນົດ.

ມາດຕາ 19: ເງື່ອນໄຂການອະນຸຍາດດຳເນີນການຂົນສົ່ງລະຫວ່າງປະເທດ.

ບັນດາວິສາຫະກິດ, ສະຫະກອນ ທີ່ມີເງື່ອນໄຂດັ່ງລຸ່ມນີ້ ຈະໄດ້ຮັບອະນຸຍາດໃຫ້ດຳເນີນ ການຂົນສົ່ງທາງບົກ ລະຫວ່າງສອງປະເທດ.

1. ຕ້ອງໄດ້ຂຶ້ນທະບຽນ ທຸລະກິດການຂົນສົ່ງທາງບົກ.
2. ຕ້ອງມີຄວາມສາມາດເຄື່ອນໄຫວ.

ກ. ມີປະສົບການດ້ານການຂົນສົ່ງທາງບົກພາຍໃນປະເທດຂອງຕົນມາກ່ອນແຕ່3ປີຂຶ້ນໄປ.

ຂ. ສຳລັບ ການຂົນສົ່ງໂດຍສານປະຈຳທາງ ຕ້ອງມີຈຳນວນ ຍານພາຫະນະຂົນສົ່ງພຽງພໍ ຕາມແຜນການທີ່ກຳນົດ ໃນບົດວິພາກເສດຖະກິດ ຂອງສາຍທາງດັ່ງກ່າວ.

3. ລະດັບວິຊາການ: ຜູ້ດຳເນີນທຸລະກິດການຂົນສົ່ງ ລະຫວ່າງປະເທດ ຕ້ອງມີຄວາມຮູ້, ຄວາມສາມາດຊັດເຈນ, ຈະແຈ້ງ ແລະ ມີຄວາມສາມາດ ດຳເນີນທຸລະກິດການຂົນສົ່ງ ໂດຍມີການຢັ້ງຢືນ, ການຄຸ້ມຄອງ ເສດຖະກິດ,ການຕອບສະໜອງດ້ານຄຸນນະພາບໃນ ການບໍລິການຂົນສົ່ງ, ມີຄຸນສົມບັດໃນການແກ້ງແຍ້ງທຸລະກິດແລະມີຄວາມປອດໄພໃນ ການດຳເນີນວິສາຫະກິດ,ດ້ວຍເປົ້າໝາຍດັ່ງກ່າວຄູ່ສັນຍາຈຶ່ງສະເໜີໃຫ້ຜູ້ດຳເນີນ ທຸລະ ກິດຂົນສົ່ງ ຕ້ອງມີຄວາມສາມາດ ໃນຂົງເຂດດັ່ງລຸ່ມນີ້:

ก. ບັນດານິຕິກຳທີ່ກ່ຽວຂ້ອງ ກັບທຸລະກິດການຂົນສົ່ງທາງບົກ (ຕົວຢ່າງ ສັນຍາ, ພັນທະ ກິດໝາຍ ຂອງຜູ້ຂົນສົ່ງ , ກິດໝາຍບໍລິສັດ , ກິດໝາຍບັນຊີ , ກິດໝາຍແຮງງານ, ກິດ ໝາຍພາສີ).

ຂ. ການຄຸ້ມຄອງດຳເນີນທຸລະກິດການຂົນສົ່ງ(ການຄິດໄລ່ລາຍຈ່າຍແລະລາຄາ ສຳເລັດ ຮູບ,ມາດຕະການຊຳລະສະສາງແລະຄວາມສາມາດທາງດ້ານການເງິນ, ການກຳນົດ ທາງດ້ານລາຄາ,ການປະກັນໄພ,ນາຍໜ້າດ້ານການຂົນສົ່ງ,ຄວາມຊ່ຽວຊານໃນການ ຄຸ້ມຄອງທາງດ້ານການຕະຫຼາດ.

ຄ. ບັນດາເງື່ອນໄຂ ແລະ ຄວາມສາມາດ ໃນການເຂົ້າຫາການຕະຫຼາດ ຖ້າມີ (ຕົວຢ່າງ ການເຂົ້າຫາດ້ານວິຊາການ, ເອກະສານການຂົນສົ່ງ, ການແກ້ງແຍ້ງ ດ້ານລາຄາ).

ງ. ບັນຫາເຕັກນິກທີ່ພົວພັນເຖິງການຂົນສົ່ງ(ຂະໜາດແລະນ້ຳໜັກບັນທຸກຂອງຍານພາ ຫະນະ,ການເລືອກເຟັ້ນຍານພາຫະນະ,ການບຳລຸງຮັກສາຍານພາຫະນະ, ການຂ່ຽນ ຖ່າຍສິນຄ້າ, ການຂົນສົ່ງວັດຖຸອັນຕະລາຍ, ສິນຄ້າທີ່ເໜົ່າ - ເໜົ່າເປື່ອຍໄວ, ບັນດາ ຫຼັກການ ປົກປັກຮັກສາສິ່ງແວດລ້ອມ ໃນການຂົນສົ່ງທາງບົກ).

ຈ. ຄວາມປອດໄພ ໃນການຂົນສົ່ງທາງບົກ (ຄືບັນດາຫຼັກການຄວາມ ປອດໄພທາງທ້ອງ ຖະໜົນ, ຕ້ານ ແລະ ສະກັດກັ້ນອຸປະຕິເຫດການຂົນສົ່ງທາງບົກ).

ມາດຕາ 20: ລາຄາຂົນສົ່ງ

1. ສຳລັບການບໍລິການ ການຂົນສົ່ງໂດຍສານທີ່ບໍ່ແມ່ນປະຈຳທາງ ແລະການຂົນສົ່ງສິນ ຄ້າ, ລາຄາຂົນສົ່ງແມ່ນຂຶ້ນກັບທ້ອງຕະຫຼາດແຕ່ຕ້ອງເອກະພາບລະຫ່ວາງຜູ້ຈ້າງຂົນສົ່ງ ແລະ ຜູ້ຂົນສົ່ງ.

2. ສຳລັບການຂົນສົ່ງໂດຍສານປະຈຳທາງ, ບັນດາວິສາຫະກິດ ທີ່ເຂົ້າຮ່ວມເຮັດການບໍລິ ການ ຂອງສອງປະເທດ ຕ້ອງມີຂໍ້ຕົກລົງດ້ານຄ່າໂດຍສານ ຮ່ວມກັນ ແລ້ວລາຍງານອົງ ການລັດ ທີ່ມີສິດອຳນາດຂອງສອງຝ່າຍຮັບຮູ້ ເພື່ອນຳພາປະຕິບັດ . ໃນກໍລະນີວິສາຫະ ກິດຈີງໃຈ ບໍ່ປະຕິບັດຕາມ ລາຄາຂົນສົ່ງ ທີ່ໄດ້ເອກະພາບກັນນັ້ນ ອົງການຄຸ້ມຄອງສາຍ ທາງສອງຝ່າຍຈະພ້ອມກັນພິຈາລະນາໃຫ້ວິສາຫະກິດທີ່ລະເມີດຢຸດການນຳໃຊ້ ສາຍ ທາງ ດັ່ງກ່າວ.

ມາດຕາ 21: ປະກັນໄພບັງຄັບ ຕໍ່ຜູ້ໂດຍສານ

ບັນດາວິສະຫະກິດ, ສະຫະກອນ ທີ່ເຮັດທຸລະກິດດ້ານການຂົນສົ່ງໂດຍສານ ຕ້ອງຊື້ປະກັນໄພຜູ້ໂດຍສານ ແລະ ປະກາດລະດັບປະກັນໄພ ຜູ້ໂດຍສານ ຢູ່ປີ້ ຫຼື ຢູ່ໃນສັນຍາຂົນສົ່ງ .

ພາກທີ VI

ການຂົນສົ່ງຄົນຜ່ານດ່ານຊາຍແດນ

ມາດຕາ 22: ຄວາມໝາຍຂອງຄຳສັບ.

1. ການຂົນສົ່ງໂດຍສານປະຈຳທາງແມ່ນການດຳເນີນການຂົນສົ່ງຜູ້ໂດຍສານທີ່ມີສະຖານີຕົ້ນທາງ, ປາຍທາງ ແລະ ບັນດາສະຖານີຈອດພັກ ລະຫວ່າງທາງ ໂດຍມີການກຳນົດຕາຕະລາງແລ່ນລົດ, ລາຄາຄ່າຂົນສົ່ງ ຊຶ່ງບຸກຄົນທົ່ວໄປ ສາມາດໃຊ້ບໍລິການໄດ້.
2. ການຂົນສົ່ງໂດຍສານ ຕາມສັນຍາ ແມ່ນການດຳເນີນ ການບໍລິການຂົນສົ່ງຜູ້ໂດຍສານ ດ້ວຍລົດໂອໂຕທີ່ບໍ່ປະຈຳທາງ ໂດຍປະຕິບັດຕາມການຕົກລົງ ລະຫວ່າງ ຜູ້ວ່າຈ້າງ ແລະ ຜູ້ຂົນສົ່ງ ໃນສັນຍາຂົນສົ່ງ.
3. ການຂົນສົ່ງນັກທ່ອງທ່ຽວແມ່ນການດຳເນີນການບໍລິການຂົນສົ່ງຜູ້ໂດຍສານ ຕາມສາຍທາງທ່ອງທ່ຽວ, ທີ່ມີແຜນການ, ລາຍການທ່ອງທ່ຽວ ແລະ ມີຈຸດໝາຍທ່ອງທ່ຽວ.

ມາດຕາ 23: ການຂົນສົ່ງໂດຍສານປະຈຳທາງ.

1. ລົດໂດຍສານປະຈຳທາງ ຕ້ອງອອກລົດຢູ່ສະຖານີລົດຂົນສົ່ງໂດຍສານ ຂອງຄູ່ສັນຍາ ແລະໄປສິ້ນສຸດຢູ່ສະຖານີລົດຂົນສົ່ງໂດຍສານ ຂອງຄູ່ສັນຍາອີກຝ່າຍໜຶ່ງ ໂດຍຜ່ານສະຖານີ ລະຫວ່າງທາງ ຕາມທີ່ສອງຝ່າຍຕົກລົງກັນ.
2. ການສະເໜີເປີດສາຍທາງຂົນສົ່ງໂດຍສານລົດປະຈຳທາງ, ການຮັບຮອງເອົາ ວິສາຫະກິດ ແລະ ຍານພາຫະນະ ທີ່ແລ່ນຕາມສາຍທາງ, ການຈັດຕັ້ງຄຸ້ມຄອງ ສາຍທາງນັ້ນ ແມ່ນ ອົງການລັດ ທີ່ມີສິດອຳນາດ ຂອງສອງຝ່າຍ ເປັນຜູ້ຕົກລົງ. ອົງການຄຸ້ມຄອງ ສາຍທາງ ຕ້ອງຊຽນແຈ້ງ ຊື່ຍານພາຫະນະ, ວິສາຫະກິດທີ່ເດີນໄຫວ, ສາຍທາງເດີນ, ລົດ,ຕາຕະລາງເວລາແລ່ນລົດໃນເອກະສານອະນຸຍາດທີ່ໄດ້ຮັບຮອງຂອງຕົນເພື່ອໃຫ້ວິສາຫະກິດ ຈັດຕັ້ງປະຕິບັດປະຕິບັດ.
3. ການຂົນສົ່ງໂດຍສານປະຈຳທາງທຸກໆຖ້ຽວຕ້ອງມີບັນຊີລາຍຊື່ຂອງຜູ້ໂດຍສານທີ່ໄປນຳລົດ, ວິສາຫະກິດຂົນສົ່ງ ຕ້ອງນຳເອົາບັນຊີລາຍຊື່ຜູ້ໂດຍສານນັ້ນ ໄປຜ່ານສະຖານີລົດເຊັນຢັ້ງຢືນ. ພ້ອມນັ້ນຜູ້ຂັບລົດ ແລະ ພະນັກງານປະຈຳລົດຕ້ອງເກັບກຳລາຍຊື່ຜູ້ໂດຍ

ສານທີ່ເພີ່ມຂຶ້ນຕາມສະຖານີ ລະຫວ່າງທາງ ໃຫ້ຄົບຖ້ວນ, ບັນຊີນັ້ນ ຕ້ອງໄດ້ແຈ້ງໃຫ້ເຈົ້າໜ້າທີ່ກວດກາ ຢູ່ດ່ານຊາຍແດນໃນເວລາມີຄວາມຕ້ອງການ.ແບບຟອມບັນຊີລາຍຊື່ນັ້ນໃຫ້ແຕ່ລະຝ່າຍຕົກລົງແລ້ວແຈ້ງໃຫ້ກັນຊາບເພື່ອຕິດຕາມ,ກວດກາ.

4. ຜູ້ໂດຍສານທຸກຄົນ ມີສິດເອົາເຄື່ອງຕິດຕົວໄປນຳ ໃນຈຳນວນບໍ່ເກີນ 20 ກິໂລ ແລະມີຂະໜາດເໝາະສົມ. ຜູ້ຂົນສົ່ງມີສິດເກັບຄ່າຂົນສົ່ງຈາກເຄື່ອງຕິດຕົວທີ່ເກີນກຳນົດ, ລາຄາຄ່າຂົນສົ່ງ ທີ່ເກັບຈາກເຄື່ອງເກີນແມ່ນບໍ່ເກີນ 2 % ຂອງລາຄາປີ້ໂດຍສານຕໍ່ 01 ກິໂລ,

5. ປີ້ໂດຍສານ ແລະ ຕົວແທນຈຳໜ່າຍປີ້ໂດຍສານ

   ກ. ປີ້ໂດຍສານ ຕ້ອງລະບຸຂໍ້ມູນ ດັ່ງນີ້: ພາສາຊາດ ແລະ ພາສາອັງກິດ, ຊື່ຕົ້ນທາງ ແລະ ປາຍທາງ, ວັນເວລາອອກລົດ, ອາຍຸນຳໃຊ້ຂອງປີ້ລົດ,ລາຄາປີ້,ປະກັນໄພ, ຊື່ ແລະ ເລກທີໜັງສືຜ່ານແດນຂອງຜູ້ໂດຍສານ.

   ຂ. ການສ້າງຕັ້ງຕົວແທນຈຳໜ່າຍປີ້ ຂອງຫົວໜ່ວຍທຸລະກິດໃດໜຶ່ງນັ້ນ ຈະຕ້ອງປະຕິບັດຕາມລະບຽບກົດໝາຍ ຂອງແຕ່ລະປະເທດຄູ່ສັນຍາ

ມາດຕາ 24: ການຂົນສົ່ງໂດຍສານ ຕາມສັນຍາ.

ການຂົນສົ່ງໂດຍສານ ຕາມສັນຍາ ຜ່ານດ່ານຊາຍແດນ ລະຫວ່າງ ສອງປະເທດ ຕ້ອງມີສັນຍາ ຂົນສົ່ງ.

1. ສັນຍາຂົນສົ່ງ. ສັນຍາຂົນສົ່ງຕ້ອງພິມເປັນສອງພາສາ, ພາສາຊາດ (ພາສາລາວ ຫຼື ພາສາຫວຽດນາມ) ແລະ ພາສາອັງກິດ ລາຍລະອຽດດັ່ງລຸ່ມນີ້:
   ກ. ຊື່ ແລະ ທີ່ຢູ່ ຂອງຜູ້ຂົນສົ່ງ;
   ຂ. ຈຸດຕົ້ນທາງ ແລະ ປາຍທາງ, ບັນດາຈຸດພັກເຊົາ ໃນຊ່ວງການເດີນທາງ;
   ຄ. ເວລາການແລ່ນລົດ;
   ງ. ລາຄາຂົນສົ່ງ;
   ຈ. ຂໍ້ກຳນົດກ່ຽວກັບຄວາມຮັບຜິດຊອບທາງດ້ານນິຕິກຳ ຂອງຜູ້ເຂົ້າຮ່ວມການຂົນສົ່ງ;
2. ບັນຊີລາຍຊື່ຜູ້ໂດຍສານ: ຍານພາຫະນະຂົນສົ່ງ ເມື່ອຂົນສົ່ງຜູ້ໂດຍສານ ຕ້ອງມີບັນຊີລາຍຊື່ຜູ້ໂດຍສານ ທີ່ໄປນຳລົດໂດຍແມ່ນຜູ້ຈ້າງຂົນສົ່ງ ເຮັດບັນຊີໂດຍສານກ່ອນລົດອອກ, ບັນຊີລາຍຊື່ຜູ້ໂດຍສານ ຕ້ອງໄດ້ແຈ້ງໃຫ້ບັນດາອົງການກ່ຽວຂ້ອງຕິດຕາມກວດກາ ແລະ ບັນດາອົງການກ່ຽວຂ້ອງອື່ນໆເມື່ອມີຄວາມຕ້ອງການ. ແບບຟອມບັນຊີລາຍຊື່ຜູ້ໂດຍສານ ອອກໃຫ້ໂດຍອົງການລັດ ທີ່ມີສິດອຳນາດ ຂອງ ຄູ່ສັນຍາ ເປັນຜູ້ກຳນົດ ແລ້ວແຈ້ງໃຫ້ກັນຊາບເພື່ອສະດວກໃນຕິດຕາມກວດກາ.

ມາດຕາ 25: ການຂົນສົ່ງນັກທ່ອງທ່ຽວ

ການຂົນສົ່ງນັກທ່ອງທ່ຽວ ຜ່ານດ່ານຊາຍແດນ ລະຫວ່າງ ສອງຝ່າຍ ຕ້ອງຮັບປະກັນ ບັນດາ ເນື້ອໃນດັ່ງລຸ່ມນີ້:

1. ຍານພາຫະນະຂົນສົ່ງໂດຍສານຕ້ອງຮັບປະກັນຄວາມປອດໄພ ທາງດ້ານເຕັກນິກ, ປົກປັກຮັກ ສາສິ່ງແວດລ້ອມ, ຄຸນນະພາບການບໍລິການ ແລະ ໄດ້ຮັບອະນຸມັດ ເຄື່ອງ ໝາຍສະເພາະ ຕາມແບບຟອມ ທີ່ໄດ້ເປັນເອກະພາບ ຈາກ ອົງການທີ່ມີສິດອຳນາດ ຂອງ ຄູ່ສັນຍາແຕ່ລະຝ່າຍ.
2. ການນຳໃຊ້ຜູ້ຂັບລົດ ແລະ ພະນັກງານຮັບໃຊ້ ປະຈຳລົດໂດຍສານ ຕ້ອງເປັນວິຊາ ການ, ມີສຸຂະ ພາບເໝາະສົມ ແລະ ໄດ້ຮັບການຝຶກອົບຮົມດ້ານການທ່ອງທ່ຽວ.
3. ມີມາດຕະການຮັບປະກັນຄວາມປອດໄພດ້ານຊີວິດ,ສຸຂະພາບແລະສັບສົມບັດ ຂອງ ນັກທ່ອງທ່ຽວຕະຫຼອດໄລຍະການຂົນສົ່ງ, ຊື້ປະກັນໄພໃຫ້ຜູ້ໂດຍສານ ນັກທ່ອງທ່ຽວ ທີ່ເດີນທາງໄປນຳຍານພາຫະນະຂົນສົ່ງດັ່ງກ່າວ.
4. ມີລາຍການທ່ອງທ່ຽວ ເຊິ່ງບໍລິສັດທ່ອງທ່ຽວ ຂອງຄູ່ສັນຍາເປັນຜູ້ສ້າງຂຶ້ນ, ຄັດຕິດໄປ ນຳບັນຊີຜູ້ໂດຍສານ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ກ່ຽວຂ້ອງປະຈຳດ່ານຊາຍແດນ. ແບບ ຟອມບັນຊີລາຍຊື່ຜູ້ໂດຍສານອອກໃຫ້ໂດຍອົງການລັດທີ່ມີສິດອຳນາດຂອງຄູ່ສັນຍາ ແລະ ຕ້ອງແຈ້ງໃຫ້ກັນຊາບເພື່ອສະດວກໃນການຕິດຕາມກວດກາ.

ພາກທີ VII

ການຂົນສົ່ງສິນຄ້າຜ່ານດ່ານຊາຍແດນ

ມາດຕາ 26: ຫຼັກການລວມ.

1. ຍານພາຫະນະຂົນສົ່ງທາງບົກທີ່ຂົນສົ່ງວັດຖຸອັນຕະລາຍ ຫຼື ສິນຄ້າທີ່ມີຂະໜາດ ແລະ ນ້ຳໜັກບັນທຸກເກີນຂໍ້ກຳນົດ,ກ່ອນຈະເຂົ້າໄປປະເທດຄູ່ສັນຍາຝ່າຍໜຶ່ງ,ຕ້ອງໄດ້ຂໍອະນຸ ຍາດຂົນສົ່ງພິເສດ ຈາກອົງການ ທີ່ມີສິດອຳນາດ ຂອງປະເທດຄູ່ສັນຍາຝ່າຍນັ້ນ.
2. ຍານພາຫະນະຂົນສົ່ງທາງບົກທີ່ມີໃບອະນຸຍາດຂົນສົ່ງພິເສດແລ້ວກໍ່ຕາມ ຍັງຕ້ອງໄດ້ມີ ປັ໊ມ ຫຼື ໃບອະນຸຍາດລົດຂົນສົ່ງ ລະຫວ່າງປະເທດ.
3. ການກວດກາ ລົດບັນທຸກນ້ຳໜັກເກີນ ຕ້ອງໄດ້ກວດກາຄັ້ງດຽວ ຢູ່ດ່ານຊາຍແດນ ຫຼື ຢູ່ສະຖານີກວດການ້ຳໜັກລົດຢູ່ໃກ້ຊາຍແດນ.ໃນກໍລະນີ ລົດບັນທຸກເກີນນ້ຳໜັກ ຕ້ອງ ໄດ້ເອົາລົງບ່ອນທີ່ກວດກາ, ຄ່າໃຊ້ຈ່າຍໃນການຍົກຂຶ້ນ ແລະ ຍົກລົງ, ຄ່າຝາກສາງ, ຄ່າປົກ ປັກຮັກສາແມ່ນເຈົ້າຂອງຍານພາຫະນະ ເປັນຜູ້ຮັບຜິດຊອບ.

ມາດຕາ 27: ສັນຍາການຂົນສົ່ງສິນຄ້າ.

ສັນຍາການຂົນສົ່ງສິນຄ້າ ແມ່ນການຕົກລົງນຳກັນ ລະຫວ່າງ ຜູ້ຂົນສົ່ງ ກັບ ເຈົ້າຂອງສິນຄ້າ, ແລະ ຕ້ອງຮັບປະກັນ ບັນດາເນື້ອໃນລະອຽດ ດັ່ງລຸ່ມນີ້:

1. ຊື່, ທີ່ຢູ່ ຂອງຜູ້ຂົນສົ່ງ , ຜູ້ສົ່ງເຄື່ອງ , ຜູ້ຮັບເຄື່ອງ;
2. ຂໍ້ຕົກລົງການຂົນສົ່ງ: ກຳນົດວັນເວລາຮັບ-ສົ່ງສິນຄ້າ, ຈຸດຮັບ-ສົ່ງສິນຄ້າ, ເງື່ອນໄຂ ການຝາກເຄື່ອງ, ໄລຍະທາງແລ່ນລົດ, ປະເພດລົດ;
3. ລາຄາຂົນສົ່ງ;
4. ກຳນົດຄວາມຮັບຜິດຊອບຂອງແຕ່ລະຝ່າຍ.

ມາດຕາ 28: ໃບນຳສົ່ງສິນຄ້າ.

1. ສິນຄ້າຂົນສົ່ງໄປນຳລົດ ຕ້ອງມີໃບນຳສົ່ງສິນຄ້າ ທີ່ຖືກຕ້ອງ;
2. ໃນກໍລະນີ ໃບບິນຂົນສົ່ງສິນຄ້າເສັຍ ຈະບໍ່ເປັນຜົນກະທົບເຖິງຜົນສັກສິດຂອງການ ສັນຍາຂົນສົ່ງສິນຄ້າ,ຖ້າວ່າສັນຍາຂົນສົ່ງນັ້ນສອດຄ່ອງຕາມສັນຍາແລະອະນຸສັນຍາ ສະບັບນີ້.

ມາດຕາ 29: ການຂົນສົ່ງສິນຄ້າ ທີ່ເໜົ່າເປື່ອຍໄວ ແລະ ສິນຄ້າອັນຕະລາຍ

1. ການຂົນສົ່ງສິນຄ້າທີ່ເໜົ່າເປື່ອຍໄວ ແລະ ສິນຄ້າອັນຕະລາຍຕ້ອງປະຕິບັດຕາມຂໍ້ກຳ ນົດກົດໝາຍຂອງປະເທດຕົນ ແລະ ຕາມຂໍ້ກຳນົດສາກົນ ຊຶ່ງທັງສອງຝ່າຍ ໄດ້ລົງ ນາມ ເປັນພາຄີ.
2. ສິນຄ້າທີ່ເໜົ່າເປື່ອຍໄວ ແລະ ສິນຄ້າອັນຕະລາຍຈະໄດ້ຮັບບູລິມະສິດໃນການ ກວດ ກາ ແລະ ຜ່ານດ່ານຊາຍແດນ.

ພາກທີ VIII

ການກຳນົດຄູ່ດ່ານຊາຍແດນ ແລະ ການເກັບຄ່າທຳນຽມ ທີ່ພົວພັນກັບ ການຂົນສົ່ງ ຜ່ານດ່ານຊາຍແດນ

ມາດຕາ 30: ການກຳນົດກ່ຽວກັບຄູ່ດ່ານຊາຍແດນ

ຄູ່ສັນຍາ ໄດ້ເອກະພາບໃນການຈັດຕັ້ງປະຕິບັດ ອະນຸສັນຍາສະບັບນີ້ ຕາມບັນດາ ຄູ່ດ່ານ ຊາຍແດນ ດັ່ງລຸ່ມນີ້:

ລ/ດ	ດ່ານລາວ		ດ່ານຫວຽດນາມ	
	ຊື່ດ່ານ	ຊື່ເສັ້ນ ທາງ	ຊື່ດ່ານ	ຊື່ເສັ້ນທາງ
1	ປາງຫີກ (ແຂວງຜົ້ງສາລີ)	2E	ໄຕຈາງ (ແຂວງດ້ຽນບຽນ)	ທາງຫຼວງແຫ່ງຊາດ 279
2	ບ້ານດ່ານ (ແຂວງຫົວພັນ)	6B	ຊຽງເຂືອງ (ແຂວງເຊີນລາ)	ທາງຂັ້ນແຂວງ 105
3	ປ່າຮາງ (ແຂວງຫົວພັນ)	6B	ລອງຊັບ (ແຂວງເຊີນລາ)	ທາງຫຼວງແຫ່ງຊາດ 43
4	ນ້ຳໂສຍ (ແຂວງຫົວພັນ)	6A	ນາແມວ (ແຂວງແທງຮວ່າ)	ທາງຫຼວງແຫ່ງຊາດ 217
5	ນ້ຳກັ່ນ (ແຂວງຊຽງຂວາງ)	7	ນ້ຳກັ່ນ (ແຂວງເຫງະອານ)	ທາງຫຼວງແຫ່ງຊາດ 7
6	ນ້ຳພາວ (ແຂວງບໍລິຄຳໄຊ)	8	ເກົ໋າແจ๋ว (ແຂວງຮ່າຕິ໋ງ)	ທາງຫຼວງແຫ່ງຊາດ 8
7	ນາເພົ້າ (ແຂວງຄຳມ່ວນ)	12	ຈາລໍ (ແຂວງກວາງບິ໋ງ)	ທາງຫຼວງແຫ່ງຊາດ 12A
8	ແດນສະຫວັນ(ແຂວງສະ ຫວັນນະເຂດ)	9	ລາວບາວ (ແຂວງກວ໋ງຈິ)	ທາງຫຼວງແຫ່ງຊາດ 9
9	ລະໄລ (ແຂວງສາລະວັນ)	15	ລະໄລ (ແຂວງກວ໋ງຈິ)	ທາງຂັ້ນແຂວງ 15
10	ດາກຕາອອກ (ແຂວງເຊກອງ)	18B	ບາເຊຍາງ(ກວ໋ງນາມ)	ທາງຫຼວງແຫ່ງຊາດ 14D
11	ພູເກົ້ອ (ແຂວງອັດຕະປື)	18	ເບີ໋ອ (ແຂວງກອນຕຸມ)	ທາງຫຼວງແຫ່ງຊາດ 40
12	ນາຊອນ (ແຂວງຫຼວງພະບາງ)		ຫ້ວຍປ໋ກ (ແຂວງດ້ຽນບຽນ)	
13	ໂກຕາຍ (ແຂວງສາລະວັນ)		ຫົ໋ງເວີນ(ເຫ໋ືອຫງ໋ຽນເຫວ໋)	
14	ສົມຫວ້ຽ (ແຂວງຫົວພັນ)	6B	ແຕນເຕັ໋ນ(ແຂວງແທງຮວ່າ)	
15	ຕາວ໋ຽ (ແຂວງສາລະວັນ)		ອາເດີ໋ດ (ເຫ໋ືອຫງ໋ຽນເຫວ໋)	

ຄູ່ດ່ານຊາຍແດນ ສົມຫວ້ຽ-ແຕນຕັ໋ນ ແລະ ຕາວ໋ຽ-ອາເດີ໋ດ ຈະໄດ້ຈັດຕັ້ງປະຕິບັດ ພາຍຫລັ໋ງທີ່ໄດ້ ເປີດການບໍລິການນ້ຳໃຊ້.

ຄູ່ສັນຍາ ອາດຈະແລກປ່ຽນ ແລະ ຕົກລົ໋ງບັນຊີລາຍຊື່ຄູ່ດ່ານຊາຍແດນໃໝ່ ແລະ ເປັນເອກະພາບ ມອບໃ໋ຫ້ກະຊວ໋ງໂຍທາທິ໋ການແລະຂົນສົ່ງລາວ ແລະ ກະຊວ໋ງຄົມມະນາຄົມຂົນສົ່ງ ຫວ໋ຽດນາມ ແຈ້ງບັນຊີ ລາຍຊື່ ຄູ່ດ່ານສັນຍາທີ່ເພີ່ມເຕີມ. ສ໋ຳລັບ ການຜ່ານດ່ານ ຂອ໋ຽຍານພາຫະນະຂົນສົ່ງຕາມດ່ານປະເພນີ ລະຫ໋ວ່າ໋ງສອ໋ງແຂວ໋ງທີ່ມີຊາຍແດນຕິດຈອດກັນນັ໋ນ ຈະແມ່ນສອ໋ງແຂວ໋ງທີ່ກ່ຽ໋ວຂ້ອ໋ງ ເປັນຜູ້ຕົກລົ໋ງນ໋ຳກັນ.

ມາດຕາ 31: ລະບຽບການຜ່ານດ່ານຊາຍແດນ

ທຸກລະບຽບການຜ່ານດ່ານຊາຍແດນເຊັ່ນການກວດກາຄົນ ເຂົ້າ-ອອກເມືອງ, ການກວດກາ ຂອງເຈົ້າໜ້າທີ່ພາສີ,ການກວດກາສຸຂານາໄມ(ສຸຂານາໄມພືດ-ສັດ)ຕ້ອງປະຕິບັດຕາມຂໍ້ກຳ ນົດກົດໝາຍ ຂອງປະເທດຄູ່ສັນຍາ ແລະ ຕາມສົນທິສັນຍາສາກົນ ຊຶ່ງທັງສອງຝ່າຍໄດ້ເປັນ ພາຄີ.

ມາດຕາ 32: ຄ່າທຳນຽມ ທີ່ພົວພັນກ່ຽວກັບ ການຂົນສົ່ງຜ່ານດ່ານຊາຍແດນ

1. ຄູ່ສັນຍາຈະເກັບ ຄ່າທຳນຽມ ຈາກການຂົນສົ່ງຜ່ານດ່ານຊາຍແດນ ຕາມອະນຸສັນຍາ ສະບັບນີ້ຄື:

ກ. ຄ່າທຳນຽມຄົມມະນາຄົມ: ຂົວ, ທາງ: ບັນດາຄ່າທຳນຽມ ເກັບໂດຍກົງຈາກການນຳໃຊ້ ເສັ້ນທາງ, ຂົວ, ອຸໂມງ ແລະ ເຮືອຂ້າມ;

ຂ. ບັນດາຄ່າທຳນຽມ ຜ່ານດ່ານຊາຍແດນ;

ຄ. ບັນດາຄ່າພາສີ,ອາກອນ ທີ່ລວມຢູ່ໃນລາຄານ້ຳມັນເຊື້ອໄຟ ທີ່ຊື້ໃນດິນແດນຂອງປະ ເທດຄູ່ສັນຍາ;

2. ຄູ່ສັນຍາຈະບໍ່ເກັບບັນດາຮ່ວງຄ່າທຳນຽມອື່ນໆທີ່ພົວພັນກັບການຂົນສົ່ງຜ່ານດ່ານຊາຍ ແດນ ນອກຈາກ ຮ່ວງທີ່ໄດ້ແຈ້ງຕາມຂ້າງເທິງນີ້.

ພາກທີ IX

ມາດຕະການຕໍ່ຜູ້ລະເມີດ

ມາດຕາ 33: ຫຼັກການລວມ ກ່ຽວກັບການແກ້ໄຂຕໍ່ຜູ້ລະເມີດ

ວິສາຫະກິດ,ສະຫະກອນ, ເຈົ້າຂອງຍານພາຫະນະ ແລະ ຜູ້ຂັບລົດ, ຫາກລະເມີດຂໍ້ກຳນົດ ຂອງສັນຍາ ແລະ ອະນຸສັນຍາສະບັບນີ້, ນອກຈາກຈະຖືກລົງໂທດ ຕາມລະບຽບກົດໝາຍ ຂອງຄູ່ສັນຍາຝ່າຍໃດໜຶ່ງແລ້ວ ຍັງຈະຕ້ອງ ໄດ້ຖືກດຳເນີນມາດຕາການ ຕາມມາດຕາ 34 ຂອງ ອະນຸສັນຍາສະບັບນີ້.

ມາດຕາ 34: ການໃຊ້ມາດຕາການຕໍ່ຜູ້ລະເມີດ

ວິສາຫະກິດ,ສະຫະກອນຂົນສົ່ງໂດຍສານ, ສິນຄ້າ ແລະເຈົ້າຂອງພາຫະນະທີ່ລະເມີດຂໍ້ກຳ ນົດຂອງອະນຸສັນຍາສະບັບນີ້ ຈະຖືກດຳເນີນມາດຕະການໂດຍອົງການລັດທີ່ມີສິດ ອຳນາດ ໃນການ ຄຸ້ມຄອງການຂົນສົ່ງ ຂອງຄູ່ສັນຍາບ່ອນທີ່ມີການລະເມີດຕາມສະຖານໜັກ ຫຼື ເບົາ ຄືດັ່ງລຸ່ມນີ້:

1. ຄັ້ງທີ 1 ໃຫ້ກ່າວເຕືອນເປັນລາຍລັກອັກສອນ;
2. ຄັ້ງທີ 2 ຖອນໃບອະນຸຍາດດຳເນີນທຸລະກິດຂົນສົ່ງ ຂອງຍານພາຫະນະທີ່ລະເມີດ;
3. ປະຕິເສດ ການອອກໃບອະນຸຍາດ ໄລຍະໃດໜຶ່ງ ຫຼື ປະຕິເສດ ການອອກໃບອະນຸຍາດຖາວອນ;
4. ຖອນໃບອະນຸຍາດດຳເນີນທຸລະກິດຂົນສົ່ງລະຫວ່າງປະເທດ.

ທັງສອງຝ່າຍຈະສົມທົບ ແລກປ່ຽນຂໍ້ມູນຂ່າວສານ ໃຫ້ກັນ ແລະ ກັນກ່ຽວກັບຍານພາຫະນະທີ່ລະເມີດ ເພື່ອດຳເນີນການ.

ພາກທີ X

ບົດບັນຍັດສຸດທ້າຍ

ມາດຕາ 35: ການສ້າງຕັ້ງ ແລະການເຄື່ອນໄຫວ ຂອງຄະນະກຳມະການອຳນວຍຄວາມສະດວກ ແກ່ການຂົນສົ່ງທາງບົກ.

1. ຄູ່ສັນຍາຈະໄດ້ສ້າງຕັ້ງຄະນະກຳມະການອຳນວຍຄວາມສະດວກແກ່ການຂົນສົ່ງ ຂອງຕົນຂຶ້ນຊຶ່ງປະກອບດ້ວຍ ຜູ້ຕາງໜ້າ ຈາກຂະແໜງການທີ່ກ່ຽວຂ້ອງ ໂດຍແມ່ນ ການນຳ ຂອງກະຊວງໂຍທາທິການແລະຂົນສົ່ງ ຫຼື ຜູ້ທີ່ໄດ້ຮັບມອບສິດເປັນປະທານ.
2. ຄະນະກຳມະການດັ່ງກ່າວມີໜ້າທີ່ໃຫ້ການຊ່ວຍເຫຼືອຄູ່ສັນຍາເພື່ອແກ້ໄຂບັນຫາ ການຂົນສົ່ງໂດຍສົມທົບກັບບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງ, ໃນການອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າແລະໂດຍສານທີ່ຜ່ານໄປມາຕາມດ່ານ ຊາຍແດນລະຫວ່າງ ສອງປະເທດ.

ມາດຕາ 36: ບັນດາອົງການຄຸ້ມຄອງ ແລະ ອອກໃບອະນຸຍາດຂົນສົ່ງລະຫວ່າງປະເທດ

1. ອົງການຄຸ້ມຄອງ.

   - **ຝ່າຍລາວ:** ກະຊວງໂຍທາທິການ ແລະ ຂົນສົ່ງ, ກົມຂົນສົ່ງ , ພະແນກ ໂຍທາທິການ ແລະ ຂົນສົ່ງ ບັນດາແຂວງ, ນະຄອນຫຼວງ ແລະ ຂະແໜງການກ່ຽວຂ້ອງ.

   - **ຝ່າຍຫວຽດນາມ:** ກະຊວງຄົມມະນາຄົມຂົນສົ່ງ, ກົມໃຫ່ຍທາງບົກ, ພະແນກຄົມມະນາຄົມຂົນສົ່ງບັນດາແຂວງ, ນະຄອນ ທີ່ຂຶ້ນກັບສູນກາງ ແລະ ຂະແໜງການກ່ຽວຂ້ອງ.

2. ອົງການອອກໃບອະນຸຍາດ:

   - **ຝ່າຍລາວ:** ກົມຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ ຫຼື ພະແນກ ໂຍທາທິການ ແລະ ຂົນສົ່ງຂອງແຂວງ, ນະຄອນຫຼວງ.

- ฝ่ายຫວຽດນາມ: ກົມໃຫ່ຍທາງບົກ ກະຊວງຄົມມະນາຄົມຂົນສົ່ງ ຫຼື .ພະແນກຄົມມະນາຄົມຂົນສົ່ງ ຂອງແຂວງ, ນະຄອນ.

3. ແຕ່ລະປີ, ອົງການລັດທີ່ມີສິດອຳນາດ ຂອງຄູ່ສັນຍາ ຈະໄດ້ປະຊຸມຮ່ວມກັນ ເພື່ອປຶກສາຫາລື, ເຈລະຈາ ບັນຫາທີ່ກ່ຽວຂ້ອງກັບການຂົນສົ່ງທາງບົກ ລະຫວ່າງສອງປະເທດ ລວມມີ ການເປີດເສັ້ນທາງຂົນສົ່ງໃໝ່,ຈັດຕັ້ງຂົນສົ່ງໂດຍສານຕາມສັນຍາ, ຂົນສົ່ງນັກທ່ອງທ່ຽວ ແລະ ຂົນສົ່ງ ສິນຄ້າ, ບັນດາມາດຕະການຍົກສູງ ຄຸນນະພາບການບໍລິການຂົນສົ່ງ, ແກ້ໄຂການລະເມີດ ແລະ ບັນຫາອື່ນໆ. ເວລາ ແລະ ສະຖານທີ່ດຳເນີນກອງປະຊຸມນັ້ນກົມຂົນສົ່ງຂອງຄູ່ສັນຍາຕົກລົງແລກປ່ຽນ ເປັນລາຍລັກອັກສອນ.

ມາດຕາ 37: ຜົນບັງຄັບໃຊ້ຂອງອະນຸສັນຍາ.

1. ອະນຸສັນຍາສະບັບນີ້ ມີຜົນບັງຄັບໃຊ້ ພາຍຫຼັງ 3 ເດືອນ ນັບແຕ່ມື້ລົງລາຍເຊັນ ແລະ ສິ້ນສຸດ ລົງໄປພ້ອມໆກັບສັນຍາ.

2. ອະນຸສັນຍາສະບັບນີ້ ຈະສືບຕໍ່ມີຜົນບັງຄັບໃຊ້ຕໍ່ໄປ ຕາມອາຍຸການບັງຄັບໃຊ້ ຂອງສັນຍາ. ຍົກເວັ້ນ ໃນກໍລະນີ ທີ່ຄູ່ສັນຍາຝ່າຍໃດໜຶ່ງ ແຈ້ງເປັນລາຍລັກອັກສອນ ໃຫ້ຄູ່ສັນຍາ ອີກ ຝ່າຍໜຶ່ງ ເພື່ອສະເໜີ ປ່ຽນແປງ ຫຼື ຍົກເລີກອະນຸສັນຍາສະບັບນີ້.

3. ນັບແຕ່ມື້ ມີຜົນສັກສິດ ອະນຸສັນຍາສະບັບນີ້ ບໍ່ສາມາດແຍກອອກຈາກສັນຍາ ແລະ ຕ້ອງປະຕິບັດຕາມກົດໝາຍຂອງທຸກຝ່າຍ ທີ່ເຂົ້າຮ່ວມສັນຍາ.

ມາດຕາ 38: ການດັດແປງ ແລະ ການເພີ່ມເຕີມ ຂອງອະນຸສັນຍາ.

ການດັດແປງ ແລະ ການເພີ່ມເຕີມ ເນື້ອໃນອະນຸສັນຍາສະບັບນີ້ໄດ້ ກໍຕໍ່ເມື່ອ ມີການສະເໜີ ເປັນລາຍລັກອັກສອນ ຂອງຄູ່ສັນຍາຝ່າຍໃດໜຶ່ງ, ພາຍໃນ 30 ວັນ ນັບແຕ່ມື້ໄດ້ຮັບໜັງສືສະເໜີດັ່ງກ່າວ, ບັນດາອົງການລັດທີ່ມີສິດອຳນາດ ຂອງສອງຝ່າຍ ຈະໄດ້ພົບປະເພື່ອປຶກສາຫາລືນຳກັນ ໃນການປ່ຽນແປງ ຫຼື ເພີ່ມເຕີມ ອະນຸສັນຍາສະບັບນີ້.

ມາດຕາ 39: ການຢຸດຊົ່ວຄາວ ໃນການປະຕິບັດອະນຸສັນຍາ.

ຄູ່ສັນຍາຝ່າຍໃດໜຶ່ງ ອາດຈະຢຸດການປະຕິບັດອະນຸສັນຍາສະບັບນີ້ ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ເປັນການຊົ່ວຄາວໄດ້ ໂດຍມີຜົນທັນທີ ໃນກໍລະນີ ອັນຮີບດ່ວນ ຊຶ່ງມີຜົນກະທົບຕໍ່ຄວາມປອດໄພ ແລະ ຄວາມໝັ້ນຄົງຂອງປະເທດຊາດຕົນ. ຄູ່ສັນຍາຝ່າຍດັ່ງກ່າວຈະແຈ້ງໃຫ້ແກ່ຄູ່ສັນຍາອີກຝ່າຍໜຶ່ງຊາບຢ່າງຮີບດ່ວນ ກ່ຽວກັບການຢຸດເຊົາປະຕິບັດ ອະນຸສັນຍາ. ການຢຸດຊົ່ວຄາວ ການປະຕິບັດອະນຸສັນຍາດັ່ງກ່າວຈະສິ້ນສຸດ ພາຍຫຼັງທີ່ສະພາບທີ່ກັບຄືນມາເປັນປົກກະຕິໂດຍມີການແຈ້ງໃຫ້ຄູ່ສັນຍາອີກຝ່າຍໜຶ່ງຊາບ ເປັນລາຍລັກອັກສອນ.

ມາດຕາ 40: ສິນທິສັນຍາສາກົນອື່ນໆ.

ການຈັດຕັ້ງປະຕິບັດ ອະນຸສັນຍາສະບັບນີ້ຈະບໍ່ມີຜົນກະທົບເຖິງສິດ ແລະ ພັນທະ ຂອງ ຄູ່ສັນຍາ ພາຍໃຕ້ສິນທິສັນຍາສາກົນ ທີ່ຄູ່ສັນຍາເປັນພາຄີ.

ມາດຕາ 41: ການພົວພັນກັບບັນດາເອກະສານຊ້ອນທ້າຍຂອງອະນຸສັນຍາ.

ເອກະສານຊ້ອນທ້າຍ ຕາມທີ່ລະບຸໃນ ມາດຕາ 10 ຂໍ້ 1.ຂ ນັ້ນ ແມ່ນສ່ວນໜຶ່ງ ທີ່ບໍ່ ແຍກອອກຈາກອະນຸສັນຍາ ແລະ ມີຄຸນຄ່າຜູກມັດ ທາງດ້ານກົດໝາຍເທົ່າທຽມກັນ.

ມາດຕາ 42: ການແກ້ໄຂຂໍ້ຂັດແຍ່ງ.

ຂໍ້ຂັດແຍ່ງໃດໆທີ່ເກີດຂຶ້ນຈາກການປະຕິບັດ ຫຼື ການຕີຄວາມໝາຍຂອງອະນຸສັນຍາ ສະບັບນີ້ ຈະຕ້ອງຖືກແກ້ໄຂ ໂດຍການປຶກສາຫາລື ຫຼື ການເຈລະຈາ.

ຜູ້ທີ່ໄດ້ຮັບການມອບໝາຍສົມຢ່າງຖືກຕ້ອງ ໄດ້ລົງລາຍເຊັນໃສ່ອະນຸສັນຍາສະບັບນີ້.

ອະນຸສັນຍາສະບັບນີ້ ເຮັດຂຶ້ນທີ່ ນະຄອນຫລວງຮ່າໂນ້ຍ, ວັນທີ 15 ກັນຍາ 2010 ເປັນສອງພາສາ, ພາສາລາວ ແລະ ພາສາຫວຽດນາມ, ທັງສອງພາສາມີຄຸນຄ່າເທົ່າທຽມກັນ.

ຕາງໜ້າ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ	ຕາງໜ້າ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ
ສົມມາດ ພົນເສນາ ລັດຖະມົນຕີວ່າການກະຊວງໂຍທາທິການ ແລະ ຂົນສົ່ງ	ໂຮ ເທ້ຽຍ ຍຸ໋ງ ລັດຖະມົນຕີວ່າການກະຊວງຄົມມະນາຄົມ ຂົນສົ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

Lao People's Democratic Republic



ປຶ້ມອະນຸຍາດຂົນສົ່ງລະຫວ່າງປະເທດ

International Transport Permit

ກົມຂົນສົ່ງ

Department of Transport

ກະຊວງໂຍທາທິການ ແລະ ຂົນສົ່ງ
Ministry of Public Works and Transport

ກົມຂົນສົ່ງ
Department of Transport

ເລກທີ No: ___ - _____ / ___

ປຶ້ມອະນຸຍາດລົດຂົນສົ່ງລະຫວ່າງປະເທດ
International Transport Permit

ປະເພດລົດ / Type of Vehicle:

☐ ລົດສະຖານທູດ / Diplomatic Vehicle
☐ ລົດອົງການຈັດຕັ້ງສາກົນ / International Organization Vehicle

ເລກທະບຽນລົດ / Registration Number

ເຄື່ອງໝາຍສະແດງປະເທດ/ Distinguishing Sign

LAO

ກະຊວງໂຍທາທິການ ແລະ ຂົນສົ່ງ
Ministry of Public Works and Transport

ກົມຂົນສົ່ງ
Department of Transport

ເລກທີ No: ___ - _____ / ___

ປຶ້ມອະນຸຍາດລົດຂົນສົ່ງລະຫວ່າງປະເທດ
International Transport Permit

ປະເພດລົດ / Type of Vehicle:

☐ ລົດຂົນສົ່ງສິນຄ້າ / Goods Transport Vehicle
☐ ລົດຂົນສົ່ງໂດຍສານ / Passengers Transport Vehicle
☐ ລົດຂົນສົ່ງນັກທ່ອງທ່ຽວ / Tourist Transport Vehicle

ເລກທະບຽນລົດ / Registration Number

ເຄື່ອງໝາຍສະແດງປະເທດ/ Distinguishing Sign

LAO

ຂໍ້ມູນຍານພາຫະນະ
The Particulars of Vehicle

1. ຂໍ້ມູນດ້ານເຕັກນິກ
Technical Data

ປະເພດລົດ _____ ຍີ່ຫໍ້ _____ ຮຸ່ນ _____
Vehicle Category Brand Model

ສີ _____ ປີທີ່ຜະລິດ _____
Colour Year of Manufacture

ຍີ່ຫໍ້ຈັກ _____ ຈຳນວນ _____ ສູບ, _____ ຊີຊີ
Engine Brand Number of Cylinders, CC

ເລກຈັກ
Engine No.

ເລກຖັງ
Chassis No.

ຂະໜາດລວງຍືດ: ກວ້າງ _____ ມມ, ຍາວ _____ ມມ, ສູງ _____ ມມ
Dimension: Width mm, Length mm, Height mm

ພວງມະໄລ: ☐ຊ້າຍ ☐ຂວາ ຈຳນວນຕັ່ງນັ່ງ _____ ບ່ອນ
Steering wheel: Left Right Number of Seats

ຂໍ້ມູນເພີ່ມເຕີມ : _____
Additional Data _____
_____

2. ຊື່ເຈົ້າຂອງພາຫະນະ: _____
Name of Vehicle owner _____

ບ້ານ _____ ໜ່ວຍ _____
Village Unit

ຖະໜົນ _____ ເມືອງ _____
Street District

ແຂວງ _____
Province

ໂທລະສັບ _____ ໂທລະສານ _____
Telephone Fax

3. ກຳນົດນຳໃຊ້ເຖິງວັນທີ _____
Valid Until

ທີ່ _____ ວັນທີ _____
Done at Date

ລາຍເຊັນ ແລະ ປະທັບຕາ
(Signature and Seal of Issuing Authority)

ການຕໍ່ອາຍຸ
Extension of validity

ຕໍ່ອາຍຸນຳໃຊ້ເຖິງວັນທີ _____
Valid Until

ທີ່ _____ ວັນທີ _____
Done at Date

ລາຍເຊັນ ແລະ ປະທັບຕາ
(Signature and Seal of Issuing Authority)

ບັນທຶກ
Record

ຂາອອກ Departure	ຂາເຂົ້າ Arrival

sample of new inter transport permit.doc

MẪU PHÙ HIỆU GIẤY PHÉP LIÊN VẬN CỦA VIỆT NAM

Số(Nr): .....

TRANSPORT
VIET NAM – LAO

Đơn vị(Company):.....

Biển đăng ký (Registered No):.....

Giấy phép có giá trị đến (Valid Until):.....

Cơ quan cấp phép/Issuing Agency

(Ký tên, đóng dấu/Singnature, seal)

MẪU GIẤY PHÉP LIÊN VẬN CỦA VIỆT NAM

Cộng hòa xã hội chủ nghĩa Việt Nam
Socialist Republic of Viet Nam

GIẤY PHÉP LIÊN VẬN VIỆT - LÀO

VIỆT NAM – LAO CROSS-BORDER TRANSPORT PERMIT

Cộng hòa Xã hội Chủ nghĩa Việt Nam
Socialist Republic of Viet Nam

Bộ Giao thông Vận tải Việt Nam đề nghị các cơ quan hữu quan cho phép phương tiện vận tải đường bộ này đi lại dễ dàng và hỗ trợ hoặc bảo vệ khi cần thiết

The Ministry of Transport of Việt Nam requests all those whom it may concern to allow the vehicle to pass freely and afford the vehicle any such assistance and protection as may be necessary

Mặt sau bìa trước/ Back side

Thông tin cơ bản về phương tiện
Basic data of the vehicle

1. Số đăng ký phương tiện
:.....
(Registration number)

2. Một số thông số kỹ thuật:
(Technical data)

- Năm sản xuất:.....
(Manufactory year)

- Nhãn hiệu (Mark):.....

- Loại xe (Model):.....

☐ Xe tải (Truck) ☐ Xe khách (Bus) ☐ Xe khác (Other)

- Màu sơn
:.....
(Colour)

- Số máy
:.....
(Engine No)

- Số khung
:.....
(Chassic No)

Trang 1

Chi tiết về nhà vận tải
Status of Transport operator

Tên đơn vị (company/operator):
.....
.....
.....
Địa chỉ (Address):
.....
.....
.....
.....
Tel:.....Fax:.....
Lĩnh vực hoạt động vận tải (Type of transport operation):
.....
.....
.....
Số giấy phép (Permit number) :.....
Ngày hết hạn (Date of expiration) :.....

Trang 2

GHI CHÚ
NOTICES

Số này có giá trị một năm
This book is valid for one year
Từ ngày: From date.... month..... year
Đến ngày: To date.... month..... year

Cửa khẩu, vùng hoạt động, nơi đến
Border, Traveling area, Destinatinon

Cửa khẩu (Border gate):.....

Vùng hoạt động (Traveling area):.....

Nơi đến (Destinatinon):.....

Ngày cấp (Date of issue):.....

Issuing Authority
(Signature, Stamp)

BIÊN PHÒNG - HẢI QUAN
FOR CUSTOMS - IMIGRATION

HẢI QUAN (CUSTOMS)		BIÊN PHÒNG (BORDER GARDS)	
Ngày đi Departure date	Ngày về Arrival Date	Ngày đi Departure date	Ngày về Arrival Date

Trang tiếp theo

BIÊN PHÒNG - HẢI QUAN
FOR CUSTOMS - IMIGRATION

HẢI QUAN (CUSTOMS)		BIÊN PHÒNG (BORDER GARDS)	
Ngày đi Departure date	Ngày về Arrival Date	Ngày đi Departure date	Ngày về Arrival Date

BIÊN PHÒNG - HẢI QUAN
FOR CUSTOMS - IMIGRATION

HẢI QUAN (CUSTOMS)		BIÊN PHÒNG (BORDER GARDS)	
Ngày đi Departure date	Ngày về Arrival Date	Ngày đi Departure date	Ngày về Arrival Date

Bìa sau

Hướng dẫn (Instuction)

1. Sổ này bao gồm 50 trang cần phải được giữ sạch sẽ.
This book contains 50 papes excluding the covers, which should be kept as clean as possible
2. Khi sổ bị mất hoặc không đọc được vì bất cứ nguyên nhân gì có thể xảy ra, người giữ giấy phép phải yêu cầu cấp giấy phép mới tại cơ quan có thẩm quyền cấp phép
When this book get lost or illegible for any reasons as it may occur the holder should request the new one at the issuing office
3. Sổ này phải xuất trình cho cơ quan có thẩm quyền khi được yêu cầu.
This book shall be produced to the competent authorities upon request
4. Nghiêm cấm việc tẩy xóa, thay đổi các điều khoản đã ghi trong sổ này.
It is prohibited to erase, add, or falsify any terms specified in this book
5. Sổ này chỉ sử dụng cho phương tiện đã được ghi trong sổ và phải được gia hạn trước ngày hết hạn một tháng.
This book shall be used for the specified vehicle only and shall be renewed before one month before the expired date.

Ghi chú (note):

Khổ giấy rộng: 11cm, dài 15cm
Page size 11 cm x 15cm

Bìa màu đỏ (Red) dùng để cấp cho tất cả các phương tiện
Red cover used for vehicles